ມາດຕະຖານແຫ່ງຊາດ ສຳລັບການແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

# ບົດທີ 2

# ການຢັ້ງຢືນຮັບຮອງອົງການປະຕິບັດງານ ດ້ານລະເບີດບໍ່ທັນແຕກ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ຄຊກລ ກ່ຽວກັບ
ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

15 ຕຸລາ 2012

# ສາລະບານ

ສາລະບານ ........................................ 2
ບັນທຶກການດັດແກ້ ........................................ 4
ການຢັ້ງຢືນຮັບຮອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ........................................ 5
1. ບົດນຳ........................................ 5
2. ຂອບເຂດ........................................ 5
3. ຂໍ້ກຳນົດດ້ານກົດໝາຍ ........................................ 5
4. ສິດໃນການອະນຸມັດໜັງສືຢັ້ງຢືນຮັບຮອງ ........................................ 6
4.1. ອົງການທີ່ຈະໄດ້ຮັບໜັງສືຢັ້ງຢືນຮັບຮອງ........................................ 6
4.2. ປະເພດການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ຕ້ອງໄດ້ຮັບການຢັ້ງຢືນຮັບຮອງ........................................ 7
5. ຄວາມຮັບຜິດຊອບລວມຂອງ ຄຊກລ ໃນຖານະເປັນອົງການອະນຸມັດໜັງສືຢັ້ງຢືນຮັບຮອງ ........................................ 7
5.1. ຄວາມເປັນເອກະລາດ, ຄວາມຍຸຕິທຳ, ຄວາມຊື່ສັດ ........................................ 7
5.2. ການຮັກສາຄວາມລັບ ........................................ 8
5.3. ການປົກປັກຮັກສາ ແລະ ຄຸ້ມຄອງເອກະສານ ........................................ 8
5.4. ຄຸນວຸດທິຂອງພະນັກງານທີ່ພິຈາລະນາໜັງສືຢັ້ງຢືນຮັບຮອງ ........................................ 8
6. ພື້ນຖານການພິຈາລະນາອະນຸມັດ ແລະ ສືບຕໍ່ນຳໃຊ້ໜັງສືຢັ້ງຢືນຮັບຮອງ........................................ 8
7. ຂັ້ນຕອນການອອກໜັງສືຢັ້ງຢືນຮັບຮອງ........................................ 9
7.1. ໜັງສືຢັ້ງຢືນຮັບຮອງຊົ່ວຄາວ. ........................................ 9
7.2. ໜັງສືຢັ້ງຢືນຮັບຮອງຖາວອນ ........................................ 9
7.2.1. ໄລຍະເວລາຂອງໜັງສືຢັ້ງຢືນຮັບຮອງ ........................................ 10
7.2.2. ການສືບຕໍ່ນຳໃຊ້ໜັງສືຢັ້ງຢືນຮັບຮອງ ........................................ 10
7.3. ການສະເໜີຂໍໜັງສືຢັ້ງຢືນຮັບຮອງ ........................................ 10
7.4. ການພິຈາລະນາຄຳຮ້ອງ ........................................ 11
7.5. ການປະເມີນຜົນການປະຕິບັດງານຢູ່ພາກສະໜາມ ........................................ 12
8. ຂັ້ນຕອນຂອງການອຸທອນ ........................................ 13
9. ການຢັ້ງຢືນຮັບຮອງອຸປະກອນ ແລະ ກິດຈະກຳສະເພາະ........................................ 13
9.1. ເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການເກັບກູ້ລະເບີດບໍ່ທັນແຕກ ........................................ 14
9.2. ຄະນະໝາກວດລະເບີດ (EDD Teams) ........................................ 14

9.3. ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ ................................15

9.4. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດບໍ່ທັນແຕກ.......................................................15

10. ການທົບທວນຄືນ ແລະ ການປ່ຽນແປງໜັງສືຢັ້ງຢືນຮັບຮອງ ທີ່ໄດ້ອະນຸມັດໃຫ້..............................15

10.1. ການວ່າຈ້າງ ຫຼື ການປ່ຽນແທນຊ່ຽວຊານ ຫຼື ພະນັກງານວິຊາການ .............................................16

11. ຂໍ້ຫ້າມ ຫຼື ຂໍ້ຈຳກັດ ຂອງໜັງສືຢັ້ງຢືນຮັບຮອງ .........................................................................16

12. ການໂຈະ ຫຼື ການຢຸດຕິໜັງສືຢັ້ງຢືນຮັບຮອງ ...........................................................................17

12.1. ການໂຈະໜັງສືຢັ້ງຢືນຮັບຮອງ................................................................................................17

12.2. ການຢຸດຕິໜັງສືຢັ້ງຢືນຮັບຮອງ ...............................................................................................18

## ບັນທຶກການດັດແກ້

### ການຄຸ້ມຄອງການດັດແກ້ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດແຫ່ງ ສປປ ລາວ

ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຈະມີການທົບທວນຄືນເປັນທາງການ 3 ປີຕໍ່ຄັ້ງ. ຖ້າຫາກມີຄວາມຈຳເປັນກໍ່ສາມາດທົບທວນກ່ອນກຳນົດໄດ້ ເປັນຕົ້ນແມ່ນບັນຫາກ່ຽວກັບຄວາມປອດໄພ ແລະ ປະສິດທິພາບຂອງການປະຕິບັດງານ ຫຼື ສຳລັບຈຸດປະສົງເພື່ອດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ. ຖ້າມີການດັດແກ້ແມ່ນໃຫ້ໃສ່ເລກທີ, ວັນທີ ແລະ ລາຍລະອຽດຂອງການດັດແກ້ໃສ່ໃນຕາຕະລາງທີ່ກຳນົດຢູ່ລຸ່ມນີ້.

ເມື່ອສຳເລັດການທົບທວນມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຢ່າງເປັນທາງການແລ້ວ ກໍ່ຈະໄດ້ເຜີຍແຜ່ໃຫ້ນຳໃຊ້. ຂໍ້ດັດແກ້ຕ່າງໆທີ່ມີຢູ່ໃນສະບັບດັດແກ້ກ່ອນໜ້ານັ້ນ ຈະຕ້ອງໄດ້ລວມເຂົ້າໄວ້ໃນສະບັບດັດແກ້ໃໝ່ເລີຍ ແລະ ໃຫ້ລຶບອອກຈາກຕາຕະລາງບັນທຶກການດັດແກ້. ຈາກນັ້ນ ກໍໃຫ້ເລີ່ມຕັ້ງຕົ້ນບັນທຶກການດັດແກ້ໃໝ່ຈົນກວ່າຈະມີການທົບທວນຄືນໃນຄັ້ງຕໍ່ໄປອີກ.

| ເລກທີ | ວັນທີ | ລາຍລະອຽດການດັດແກ້ |
|---|---|---|
| 1 | 30 ມິຖຸນາ 11 | ຂໍ້ 3, ປ່ຽນແປງຄຳສັບຢູ່ໝາຍເຫດໃນທ້າຍຂອງວັກ ແຕ່ເນື້ອໃນຄວາມໝາຍບໍ່ມີຫຍັງປ່ຽນແປງ.<br>ຂໍ້ 4, ປ່ຽນແປງຄຳສັບຢູ່ວັກທຳອິດ ແລະ ລຶບວັກທີສອງອອກ.<br>ຂໍ້ 4.2, ປ່ຽນແປງຢູ່ໃນຫົວຂໍ້ປະເພດຂອງການປະຕິບັດງານດ້ານ ລບຕ/ລະເບີດຝັງດິນທີ່ຕ້ອງຖືກຢັ້ງຢືນຮັບຮອງ.<br>ຂໍ້ 6, ເພີ່ມວັກຍ່ອຍ ກໍ ເປັນວັກໃໝ່ ແລະ ເພີ່ມຕອນທ້າຍຂອງໝາຍເຫດ.<br>ຂໍ້ 7, 7.1, 7.1.1 ແລະ 7.2. ປ່ຽນເປັນຂໍ້ 7 ແລະ 7.1, ຂໍ້ 7.1.1 ລຶບອອກ, ຂໍ້ 7.2 ປ່ຽນແປງຈຸດນ້ອຍໆ.<br>ຂໍ້ 7.4, ລຶບສອງປະໂຫຍກທີ່ໝາຍເປັນຕົວເຂັ້ມໄວ້ໃນວັກທີສອງອອກ, ລຶບຕົວເຂັ້ມອອກຈາກວັກຍ່ອຍທັງໝົດ, ປ່ຽນຄຳສັບຢູ່ວັກຍ່ອຍ ກໍ, ລຶບປະໂຫຍກທີສອງອອກຈາກວັກຍ່ອຍ ສໍ, ລຶບວັກຍ່ອຍ ຖໍ ອອກ, ດັດແກ້ໝາຍເຫດຢູ່ກ້ອງວັກຍ່ອຍ ບໍ, ເພີ່ມວັກໃໝ່ກ່ຽວກັບເອກກະສານ, ລຶບວັກ ແລະ ສອງວັກຍ່ອຍທີ່ອ້າງອີງເຖິງການຈຳກັດເວລາອອກ, ດັດແກ້ວັກຕ່າງໆທີ່ກ່ຽວກັບການອອກໜັງສືຢັ້ງຢືນຮັບຮອບ.<br>ຂໍ້ 10, ປ່ຽນແປງຢູ່ວັກຍ່ອຍ ກໍ ແລະ ຂໍ.<br>ຂໍ້ 12.1, ເພີ່ມວັກຍ່ອຍ ກໍ ເປັນວັກໃໝ່ ແລະ ປ່ຽນແປງຢູ່ວັກຍ່ອຍ ຂໍ.<br>ຂໍ້ 12.2, ເພີ່ມວັກຍ່ອຍ ກໍ ເປັນວັກໃໝ່ ແລະ ປ່ຽນແປງຢູ່ວັກຍ່ອຍ ຂໍ. |
| | | |
| | | |
| | | |
| | | |
| | | |
| | | |
| | | |

# ການຢັ້ງຢືນຮັບຮອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ

## 1. ບົດນໍາ

ຄຊກລ ໃນຖານະທີ່ເປັນອົງການ ທີ່ມີສິດໃນການຄວບຄຸມ ແລະ ອອກຂໍ້ກໍານົດກົດລະບຽບ ສໍາລັບການປະຕິບັດງານດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ, ມີຄວາມຮັບຜິດຊອບຮັບປະກັນໃຫ້ບັນດາອົງການປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ປະຕິບັດ ຫຼື ຈະເຂົ້າມາປະຕິບັດວຽກງານເກັບກູ້ລະເບີດຢູ່ ສປປ ລາວ ຕ້ອງມີຄວາມສາ ມາດທີ່ຈໍາເປັນ ໃນການປະຕິບັດກິດຈະກໍາການປະຕິບັດງານເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກໃຫ້ມີຄວາມປອດໄພ, ມີປະສິດທິພາບ ແລະ ປະສິດທິຜົນ. ບັນຫາດັ່ງກ່າວແມ່ນສາມາດບັນລຸໄດ້ ໂດຍການຢັ້ງຢືນຮັບຮອງໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ.

ການຢັ້ງຢືນຮັບຮອງ ແມ່ນຂະບວນການທີ່ນໍາໃຊ້ ເພື່ອກໍານົດ ແລະ ຢັ້ງຢືນຄຸນນະພາບ ຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ແລະ ຮັບຮູ້ເປັນທາງການ ໃນຄວາມສາມາດໃນການວາງແຜນ, ບໍລິຫານຄຸ້ມຄອງ ແລະ ການດໍາເນີນກິດຈະກໍາການປະຕິບັດງານເພື່ອແກ້ໄຂບັາຫາ ລບຕ ໃຫ້ສອດຄ່ອງກັບມາດຕະຖານແຫ່ງຊາດ ສໍາລັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ຂອງ ສປປ ລາວ. ໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ແມ່ນເປັນການສ້າງຄວາມເຊື່ອຖືໃຫ້ແກ່ອົງການປະຕິບັດງານດ້ານລະເບີດບໍທັນແຕກເອງ ແລະ ທັງສ້າງຄວາມເຊື່ອໝັ້ນ ໃນຄວາມສາມາດຂອງອົງການເຫຼົ່ານີ້ ຕໍ່ຜູ້ໃຫ້ທຶນ, ຄຊກລ ແລະ ຜູ້ໄດ້ຮັບຜົນປະໂຫຍດຈາກການປະຕິບັດງານດ້ານລະເບີດບໍ່ທັນແຕກ.

## 2. ຂອບເຂດ

ມາດຕະຖານແຫ່ງຊາດບົດນີ້ ກໍານົດຂັ້ນຕອນ ແລະ ເງື່ອນໄຂ ໃນການສະເໜີຂໍ ແລະ ນໍາໃຊ້ໜັງສືຢັ້ງຢືນຮັບຮອງເຂົ້າໃນການວາງແຜນ, ບໍລິຫານຄຸ້ມຄອງ ແລະ ດໍາເນີນກິດຈະກໍາການປະຕິບັດງານດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ.

## 3. ຂໍ້ກໍານົດດ້ານກົດໝາຍ

ມະຕິຕົກລົງ ເລກທີ 01/ນຍ ລົງວັນທີ 29/04/2004 ຂອງລັດຖະບານແຫ່ງ ສປປ ລາວ ກ່ຽວກັບ **'ແຜນຍຸດທະສາດແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ ຢູ່ ສປປ ລາວ 2003-2013'** ໄດ້ກໍານົດຂອບເຂດແຜນງານ ໃນການສ້າງຕັ້ງ ຄຊກລ ຊຶ່ງມີຄວາມຮັບຜິດຊອບໃນການອອກໜັງສືຢັ້ງຢືນຮັບຮອງ, ກວດກາອົງການປະຕິບັດງານດ້ານລະເບີດ ທີ່ປະຕິບັດຢູ່ ສປປ ລາວ.

ພ້ອມນັ້ນ **'ມາດຕາ 2 ຂອງດໍາລັດນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ 33/ນຍ, ລົງວັນທີ 17 ມີນາ 2004'** ວ່າດ້ວຍ ການສ້າງຕັ້ງ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ ກ່າວວ່າ:

*" ຄຊກລ ມີຄວາມຮັບຜິດຊອບດັ່ງນີ້:*

*3. ອອກໜັງສືຢັ້ງຢືນຮັບຮອງ ແລະ ກວດກາ ທຸກອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ."*

ໝາຍເຫດ: ການປະເມີນຜົນ ແລະ ການຮັບຮອງເອົາຂໍ້ກໍານົດໃນການຖອດຖອນໜັງສືອະນຸຍາດການເປັນຜູ້ປະຕິບັດງານ ໄດ້ລວມເອົາໄວ້ໃນຂະບວນການອອກໃບໜັງສືຢັ້ງຢືນຮັບຮອງ.

## 4. ສິດໃນການອະນຸມັດໜັງສືຢັ້ງຢືນຮັບຮອງ

ການຢັ້ງຢືນຮັບຮອງການປະຕິບັດງານດ້ານລະເບີດບໍ່ທັນແຕກໃນ ສປປ ລາວ ແມ່ນສິດ ແລະ ໜ້າທີ່ຂອງ ຄຊກລ ແຕ່ພຽງຜູ້ດຽວ ແລະ ແຍກຕ່າງຫາກຈາກຂັ້ນຕອນການຂໍອະນຸມັດຈາກລັດຖະບານແຫ່ງ ສປປ ລາວ ຫຼື ຄຊກລ. ຂັ້ນຕອນການອະນຸມັດທີ່ກ່າວເຖິງຂ້າງເທິງນັ້ນ ລວມມີ ຂັ້ນຕອນຮັບຮອງໜັງສືອະນຸຍາດດຳເນີນການປະຕິບັດງານ, ຂັ້ນຕອນຂໍໜັງສືອະນຸຍາດດຳເນີນທຸລະກິດ ຫຼື ຂໍ້ຕົກລົງທີ່ເປັນທາງການອື່ນໆທີ່ອາດມີຢູ່ໃນປະຈຸບັນ ເພື່ອປະຕິບັດງານຢູ່ ສປປ ລາວ.[1]

### 4.1. ອົງການທີ່ຈະໄດ້ຮັບໜັງສືຢັ້ງຢືນຮັບຮອງ

ທຸກອົງການທີ່ປະຕິບັດງານກ່ຽວກັບລະເບີດບໍ່ທັນແຕກຢູ່ ສປປ ລາວ ຕ້ອງໄດ້ຮັບການຢັ້ງຢືນຮັບຮອງຕາມທີ່ກຳນົດໃນມາດຕະຖານແຫ່ງຊາດ. ອົງການດັ່ງກ່າວມີດັ່ງລຸ່ມນີ້:

ກ. ອົງການຈັດຕັ້ງຂອງລັດຖະບານ ເຊັ່ນ: ໂຄງການເກັບກູ້ລະເບີດແຫ່ງຊາດລາວ (ຄກລ), ກອງທັບແຫ່ງ ສປປ ລາວ ໃນກໍລະນີປະຕິບັດງານດ້ານລະເບີດບໍ່ທັນແຕກ ເພື່ອມະນຸດສະທຳ ຫຼື ເພື່ອການພັດທະນາ.

ຂ. ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ສະມາຄົມຊ່ວຍເຫຼືອຕ່າງໆຂອງສາກົນ ແລະ ລາວ.

ຄ. ອົງການທີ່ດຳເນີນທຸລະກິດ ທີ່ປະຕິບັດງານ ຫຼື ມີຄວາມປະສົງຢາກປະຕິບັດງານ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດຂອງຕົນ.

ງ. ອົງການທີ່ດຳເນີນທຸລະກິດ ທີ່ປະຕິບັດງານ ຫຼື ມີຄວາມປະສົງ ທີ່ຈະປະຕິບັດແບບທຸລະກິດຮ່ວມປະສົມ ຫຼື ໃນຮູບແບບຫຸ້ນສວ່ນ ກັບອົງການຈັດຕັ້ງອື່ນ ແລະ ປະຕິບັດງານ ພາຍໃຕ້ໜັງສືອະນຸຍາດດຳເນີນທຸລະກິດ ຫຼື ຂໍ້ຕົກລົງທາງການຂອງລັດຖະບານຂອງອົງການທີ່ເປັນຄູ່ຮ່ວມງານ.

ຈ. ອົງການທີ່ດຳເນີນທຸລະກິດ ທີ່ມີຄວາມປະສົງຢາກປະຕິບັດງານ ດ້ານການເກັບກູ້ລະເບີດ ໃນຮູບແບບສັນຍາຕໍ່ຊ່ວງ ຈາກຜູ້ຮັບເໝົາຕາມສັນຍາແມ່ ທີ່ດຳເນີນພາຍໃຕ້ໜັງສືອະນຸຍາດດຳເນີດທຸລະກິດ ຫຼື ຂໍ້ຕົກລົງທາງການກັບລັດຖະບານແຫ່ງ ສປປ ລາວ.

ທຸກອົງການທີ່ມີຄວາມປະສົງຈະປະຕິບັດງານດ້ານລະເບີດບໍ່ທັນແຕກ ຢູ່ ສປປ ລາວ ຈະຕ້ອງຍື່ນຄຳຮ້ອງຂໍໜັງສືຢັ້ງຢືນຮັບຮອງເຖິງ ຄຊກລ ຕາມທີ່ກຳນົດໃນມາດຕະຖານແຫ່ງຊາດ.

ນອກຈາກກໍລະນີຍົກເວັ້ນໃດໜຶ່ງ ທີ່ ຄຊກລ ກຳນົດໄວ້, ການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະບໍ່ອະນຸຍາດໃຫ້ຈັດຕັ້ງປະຕິບັດ ຈົນກວ່າຈະໄດ້ຮັບໜັງສືຢັ້ງຢືນຮັບຮອງ.

1. ເຫດຜົນທີ່ເຮັດແນວນີ້ ຍ້ອນວ່າ ໃນຂະບວນການຂໍອະນຸມັດຈາກພາກລັດ ແມ່ນມີການກ່ຽວຂ້ອງກັບຫຼາຍພາກສ່ວນ ແລະ ມີລະບຽບການສະເພາະ ຖ້າຫາກລວມເອົາການຢັ້ງຢືນຮັບຮອງເຂົ້າໃນຂະບວນການເຫຼົ່ານີ້ ມັນຈະເຮັດໃຫ້ມີຄວາມສັບສົນຕໍ່ການອອກໜັງສືຢັ້ງຢືນຮັບຮອງ.

## 4.2. ປະເພດການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ຕ້ອງໄດ້ຮັບການຢັ້ງຢືນຮັບຮອງ

ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະຖືກຢັ້ງຢືນຮັບຮອງ ເປັນແຕ່ລະປະເພດການປະຕິບັດງານທີ່ຕົນຈັດຕັ້ງປະຕິບັດຢູ່ໃນປະຈຸບັນ. ການປະຕິບັດງານດ້ານ ລບຕ ແມ່ນກວມເອົາ ການສຳຫຼວດ, ຄູ່ມືການເກັບກູ້ ລບຕ, ຄູ່ມືການເກັບກູ້ກັບລະເບີດຝັງດິນ, ການເກັບກູ້ ລບຕ ດ້ວຍກົນຈັກ (ການກະກຽມໜ້າດິນ, ການສຳຫຼວດ ຫຼື ການເກັບກູ້) , ການເກັບກູ້ ລບຕ ດວ້ຍໝາ (ການສຳຫຼວດ ຫຼື ການເກັບກູ້), ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ, ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ ແລະ ການກວດກາຄຸ້ມຄອງຄຸນນະພາບໃນການປະຕິບັດງານການເກັບກູ້ ລບຕ/ລະເບີດຝັງດິນ.

ໝາຍເຫດ: ໜັງສືຢັ້ງຢືນຮັບຮອງມີຄວາມຕ້ອງການ ສຳລັບກິດຈະກຳການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ປະຕິບັດສະເພາະໜ້າວຽກດຽວ ຫຼື ກິດຈະກຳຫຼັກເທົ່ານັ້ນ. ສ່ວນອົງປະກອບຍ່ອຍທີ່ປະຕິບັດງານເປັນສ່ວນໜຶ່ງຂອງກິດຈະກຳຫຼັກຂອງອົງການ ແລະປະຕິບັດພາຍໄຕ້ລະບຽບການປະຕິບັດງານອັນດຽວກັນ, ໃນກໍລະນີນີ້ ອົງປະກອບຍ່ອຍຂອງການປະຕິບັດງານ ແມ່ນບໍ່ຈຳເປັນຕ້ອງຖືກຢັ້ງຢືນຮັບຮອງ.

ສຳລັບການເກັບກູ້ລະເບີດບໍ່ທັນແຕກດ້ວຍກົນຈັກ ແລະ ດ້ວຍໝານັ້ນ ກົນຈັກແຕ່ລະຊະນິດ ຫຼື ແຕ່ລະຄະນະໝາກວດລະເບີດ ຈະຕ້ອງຖືກຢັ້ງຢືນຮັບຮອງແຍກສະເພາະເປັນແຕ່ລະອັນ.

ສຳນັກງານໃຫຍ່ ແລະ ການສະໜັບສະໜູນຕ່າງໆ ທີ່ເປັນສ່ວນສຳຄັນຕໍ່ຄວາມປອດໄພ ແລະ ປະສິດທິພາບ ຂອງປະເພດການປະຕິບັດງານທີ່ສະເໜີຂໍໜັງສືຢັ້ງຢືນຮັບຮອງ ກໍ່ຕ້ອງຖືກກວດສອບໃນລະຫວ່າງຂະບວນການພິຈາລະນາໜັງສືຢັ້ງຢືນຮັບຮອງເຊັ່ນກັນ.

## 5. ຄວາມຮັບຜິດຊອບລວມຂອງ ຄຊກລ ໃນຖານະເປັນອົງການອະນຸມັດໜັງສືຢັ້ງຢືນຮັບຮອງ

ຄວາມຮັບຜິດຊອບລວມຂອງ ຄຊກລ ໃນຖານະເປັນອົງການອະນຸມັດໜັງສືຢັ້ງຢືນຮັບຮອງມີດັ່ງນີ້.

### 5.1. ຄວາມເປັນເອກະລາດ, ຄວາມຍຸຕິທຳ, ຄວາມຊື່ສັດ

ຄຊກລ ມີຄວາມຮັບຜິດຊອບຮັບປະກັນໃຫ້ພະນັກງານທີ່ກ່ຽວຂ້ອງກັບການພິຈາລະນາໜັງສືຢັ້ງຢືນຮັບຮອງມີຄວາມ ເປັນອິດສະຫຼະຈາກຄວາມກົດດັນທາງດ້ານເສດຖະກິດ, ການເງິນ ຫຼື ຄວາມກົດດັນອື່ນໆຊຶ່ງອາດຈະກະທົບຕໍ່ ການຕັດສິນບັນຫາຂອງເຂົາເຈົ້າ.

ຄຊກລ ຕ້ອງຮັບປະກັນວ່າ ພະນັກງານທີ່ເຮັດໜ້າທີ່ພິຈາລະນາໜັງສືຢັ້ງຢືນຮັບຮອງ ໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະບໍ່ເຂົ້າໄປຫຍຸ້ງກ່ຽວກັບວຽກງານໃດໜຶ່ງ ທີ່ອາດຈະມີຜົນຕໍ່ຄວາມເປັນເອກະລາດ ແລະຄວາມຊື່ສັດໃນການຕັດສິນບັນຫາ ໃນເວລາປະຕິບັດການກວດກາ, ການຕີລາຄາ ຫຼື ການຕິດຕາມກິດຈະກຳການປະຕິບັດງານ. ໂດຍສະເພາະ ພະນັກງານເຮັດໜ້າທີ່ພິຈາລະນາໜັງສືຢັ້ງຢືນຮັບຮອງ ແມ່ນຫ້າມບໍ່ໃຫ້ເຂົ້າໄປພົວພັນໂດຍກົງກັບບັນດາອົງການທີ່ເປັນຜູ້ອອກແບບວາງແຜນ, ຜະລິດ, ສະໜອງ, ຕິດຕັ້ງ, ສະໜອງການບໍລິການ ຫຼືອຸປະກອນ ໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ປະຕິບັດງານ ຫຼື ມີຈຸດປະສົງທີ່ຈະປະຕິບັດງານດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ.

ທຸກອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ມີສິດສະເໜີຂໍໜັງສືຢັ້ງຢືນຮັບຮອງ ເພື່ອດຳເນີນກິດຈະກຳການປະຕິບັດງານເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ. ຄຊກລ ມີຄວາມຮັບຜິດຊອບຮັບປະກັນໃຫ້ການອອກໜັງສື ຢັ້ງຢືນຮັບຮອງ ຖືກປະຕິບັດດ້ວຍຄວາມທ່ຽງທຳ, ເປັນເອກະລາດ ແລະ ເປັນທຳ.

### 5.2. ການຮັກສາຄວາມລັບ

ຄຊກລ ຕ້ອງຮັບປະກັນຮັກສາທຸກຂໍ້ມູນຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ໄດ້ຮັບ ໃນລະຫວ່າງການພິຈາລະນາໜັງສືຢັ້ງຢືນຮັບຮອງໃຫ້ເປັນຄວາມລັບທາງລາຊະການ. ສິດທິໃນການເປັນເຈົ້າຈະຕ້ອງໄດ້ຮັບການປົກປ້ອງ. ຄຊກລ ຈະເຜີຍແຜ່ລາຍລະ ອຽດຂອງການຢັ້ງຢືນຮັບຮອງໃຫ້ອົງການທີ່ມີສ່ວນກ່ຽວຂ້ອງໂດຍກົງເທົ່ານັ້ນເປັນຕົ້ນ ຜູ້ສະເໜີຂໍໜັງສືຢັ້ງຢືນຮັບຮອງ, ຜູ້ທີ່ພິຈາລະນາ ແລະ ຕິດຕາມ ການປະຕິບັດໜັງສືຢັ້ງຢືນຮັບຮອງ.

### 5.3. ການປົກປັກຮັກສາ ແລະ ຄຸ້ມຄອງເອກະສານ

ຄຊກລ ຈະເປັນຜູ້ກະກຽມ ແລະ ເກັບຮັກສາ ທຸກເອກະສານການປະເມີນຜົນ, ການກວດກາ ແລະ ຈະແລກປ່ຽນຂໍ້ມູນເຫຼົ່ານີ້ ກັບອົງການທີ່ມີສ່ວນກ່ຽວຂອ້ງເທົ່ານັ້ນ. ທຸກເອກະສານຈະຕ້ອງຖືກເກັບຮັກສາໄວ້ຢ່າງໜ້ອຍສຸດ 10 ປີ ໂດຍຮັບປະກັນທັງຄວາມປອດໄພ ແລະ ຄວາມໄວ້ວາງໃຈຈາກຜູ້ສະເໜີ.

### 5.4. ຄຸນວຸດທິຂອງພະນັກງານທີ່ພິຈາລະນາໜັງສືຢັ້ງຢືນຮັບຮອງ

ຄຊກລ ຕ້ອງຮັບປະກັນໃຫ້ພະນັກງານທຸກຄົນທີ່ເຮັດໜ້າທີ່ພິຈາລະນາເພື່ອອອກໜັງສືຢັ້ງຢືນຮັບຮອງ ຕ້ອງມີຄວາມຮູ້ຄວາມສາມາດ ແລະ ປະສົບການ ກ່ຽວກັບປະເພດຂອງໜັງສືຢັ້ງຢືນຮັບຮອງທີ່ສະເໜີຂໍມາ.

ຕ້ອງມີປະສົບການ ໃນການປະຕິບັດວຽກງານໂຕຈິງ ຢູ່ ສປປ ລາວ ໃນຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ການເກັບກູ້ ລບຕ/ລະເບີດຝັງດິນ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ/ລະເບີດຝັງດິນ ຫຼື ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ.

ນອກຈາກນັ້ນ ການປະເມີນການປະຕິບັດງານຢູ່ພາກສະໜາມ ຂອງອົງການເກັບກູ້ລະເບີດບໍ່ທັນແຕກ ຕ້ອງມີພະນັກງານວິຊາການທຳລາຍລະເບີດ ລະດັບ 4 ໜຶ່ງຄົນ ປະກອບຢູ່ໃນຄະນະປະເມີນຜົນນຳ. ຄຸນວຸດທິດັ່ງກ່າວຕ້ອງໃຫ້ສອດຄ່ອງກັບທີ່ກຳນົດໄວ້ໃນ **ບົດທີ 8 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການທຳລາຍລະເບີດ".**

## 6. ພື້ນຖານການພິຈາລະນາອະນຸມັດ ແລະ ສືບຕໍ່ນຳໃຊ້ໜັງສືຢັ້ງຢືນຮັບຮອງ

ພື້ນຖານໃນການພິຈາລະນາອະນຸມັດ ແລະ ສືບຕໍ່ນຳໃຊ້ໜັງສືຢັ້ງຢືນຮັບຮອງ ເພື່ອດຳເນີນກິດຈະກຳການປະຕິບັດງານດ້ານລະເບີດບໍ່ທັນແຕກໃນ ສປປ ລາວ ມີຄື:

ກ. ອົງການປະຕິບັດງານດ້ານ ລບຕ ຕ້ອງມີໜັງສືອະນຸມັດທີ່ກ່ຽວຂ້ອງ ຈາກລັດຖະບານ ເພື່ອປະຕິບັດງານ ຢູ່ ສປປ ລາວ (ຫຼືການອະນຸມັດຍັງຢູ່ໃນຂັ້ນຕອນການພິຈະລະນາ).

ໝາຍເຫດ: ການອະນຸມັດທີ່ກ່ຽວຂ້ອງປະກອບມີ ໜັງສືອະນຸຍາດດຳເນີນການປະຕິບັດງານ ແລະ ໜັງສືອະນຸຍາດດຳເນີນທຸລະກິດ.

ຂ. ຜູ້ສະເໜີຕ້ອງສາມາດປະຕິບັດຕາມຂໍ້ກຳນົດທີ່ກ່ຽວຂ້ອງ ຕາມທີ່ລະບຸໃນມາດຕະຖານແຫ່ງຊາດ.

**ຄ. ໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກນັ້ນ ສາມາດນຳໃຊ້ໄດ້ຕາບເທົ່າທີ່ຍັງປະຕິບັດສອດຄ່ອງກັບມາດຖານແຫ່ງຊາດຢູ່.**

ງ. ໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ ແມ່ນບົນພື້ນຖານກິດຈະກຳການປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ຈະປະຕິບັດ ແລະ ບໍ່ອະນຸຍາດໃຫ້ປະຕິບັດນອກເໜືອຈາກກິດຈະກຳທີ່ໄດ້ອະນຸມັດໃນໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ນັ້ນ.

## 7. ຂັ້ນຕອນການອອກໜັງສືຢັ້ງຢືນຮັບຮອງ

ການສະເໜີຂໍໜັງສືຢັ້ງຢືນຮັບຮອງໃນ ສປປ ລາວ ຈະປະຕິບັດເປັນ 2 ຂັ້ນຕອນຄື:

ກ. ປະເມີນຜົນເບື້ອງຕົ້ນ ເອກະສານຫຼັກຖານທີ່ອົງການກ່ຽວຂ້ອງສະເໜີມາ.

ຂ. ປະເມີນຜົນການປະຕິບັດງານຢູ່ພາກສະໜາມ ກໍ່ເພື່ອຢັ້ງຢືນວ່າ ກິດຈະກຳການປະຕິບັດງານເພື່ອແກ້ໄຂບັນຫາ ລບຕ/ລະເບີດຝັງດິນ ໄດ້ປະຕິບັດສອດຄ່ອງກັບລະບຽບການທີ່ໄດ້ອະນຸມັດແລ້ວ.

ຖ້າການປະຕິບັດຂັ້ນຕອນທີ່ໜຶ່ງປະສົບຜົນສຳເລັດເປັນທີ່ໜ້າພໍໃຈ ກໍ່ອາດມີການອະນຸມັດໜັງສືຢັ້ງຢືນຮັບຮອງຊົ່ວຄາວໃຫ້ ແລະ ຖ້າການປະຕິບັດຂັ້ນຕອນທີ່ສອງປະສົບຜົນສຳເລັດເປັນທີ່ໜ້າພໍໃຈ ກໍ່ອາດຈະອະນຸມັດໜັງສືຢັ້ງຢືນຮັບຮອງຖາວອນໃຫ້.

### 7.1. ໜັງສືຢັ້ງຢືນຮັບຮອງຊົ່ວຄາວ.

ການອອກໜັງສືຢັ້ງຢືນຮັບຮອງຊົ່ວຄາວ ໃຫ້ອົງການປະຕິບັດງານດ້ານການເກັບກູ້ລະເບີດ ທີ່ປະຕິບັດສອດຄ່ອງກັບເງື່ອນໄຂຂອງການປະເມີນຜົນເບື້ອງຕົ້ນ ເພື່ອອະນຸຍາດໃຫ້ອົງການສາມາດເລີ່ມຕົ້ນການປະຕິບັດງານ ໂດຍຈະມີການປະເມີນຜົນ ການປະຕິບັດງານຢູ່ພາກສະໜາມໃນໄລຍະຕໍ່ໄປ.

ໜັງສືຢັ້ງຢືນຮັບຮອງຊົ່ວຄາວ ຈະອະນຸມັດໃຫ້ ໃນກຳນົດເວລາສະເພາະພຽງແຕ່ 6 ເດືອນ ເທົ່ານັ້ນ. ຖ້າຫາກສິ້ນສຸດໄລຍະທີ່ກຳນົດໃຫ້ແລ້ວ ບັນດາອົງການຍັງບໍ່ສາມາດເຮັດບົດປະເມີນຜົນພາກສະໜາມໄດ້ ໜັງສືຢັ້ງຢືນດັ່ງກ່າວຈະສິ້ນສຸດ ແລະ ອົງການຈະບໍ່ໄດ້ຮັບອະນຸຍາດໃຫ້ດຳເນີນການເກັບກູ້ ລບຕ/ລະເບີດຝັງດິນ ຢູ່ ສປປ ລາວ.

ຄຊກລ ອາດຈະວາງບາງຂໍ້ຫ້າມ ແລະ ຂອບເຂດຈຳກັດໃດໜຶ່ງ ຢູ່ໃນໜັງສືຢັ້ງຢືນຮັບຮອງຊົ່ວຄາວ ທີ່ອອກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຕາມທີ່ເຫັນສົມຄວນ.

ການອະນຸມັດໜັງສືຢັ້ງຢືນຮັບຮອງຊົ່ວຄາວໃຫ້ ບໍ່ໝາຍຄວາມວ່າອົງການປະຕິບັດງານການເກັບກູ້ລະເບີດ ຈະຕ້ອງໄດ້ຮັບໜັງສືຢັ້ງຢືນຮັບຮອງຖາວອນແຕ່ປະການໃດ.

### 7.2. ໜັງສືຢັ້ງຢືນຮັບຮອງຖາວອນ

ໜັງສືຢັ້ງຢືນຮັບຮອງຖາວອນ ຈະອອກໃຫ້ສະເພາະອົງການປະຕິບັດງານດ້ານການເກັບກູ້ ລບຕ/ລະເບີດຝັງດິນ ທີ່ປະຕິບັດສອດຄ່ອງກັບຂໍ້ກຳນົດຕ່າງໆຂອງການປະເມີນຜົນເບື້ອງຕົ້ນ ແລະ ການປະເມີນຜົນພາກສະໜາມ.

ຄຊກລ ອາດຈະວາງບາງຂໍ້ຫ້າມ ແລະ ຂອບເຂດຈຳກັດໃດໜຶ່ງ ຢູ່ໃນໜັງສືຢັ້ງຢືນຮັບຮອງຊົ່ວຄາວ ທີ່ອອກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຕາມທີ່ເຫັນສົມຄວນ.

ການທີ່ ຄຊກລ ຈະດຳເນີນການປະເມີນຜົນການປະຕິບັດງານຢູ່ພາກສະໜາມ ຫຼື ບໍ່ນັ້ນ ແມ່ນອີງໃສ່ ຜົນຂອງການປະເມີນຜົນເອກະສານຄຳຮ້ອງ ແລະ ປັດໄຈຕ່າງໆ ເຊັ່ນ: ຊື່ສຽງ, ປະຫວັດການປະຕິບັດງານ (ທັງໃນລະດັບສາກົນ ແລະ ລະດັບຊາດ), ຄຸນວຸດທິ ແລະ ປະສົບການ ຂອງພະນັກງານບໍລິຫານຄຸ້ມຄອງ ແລະ ວິຊາການ ຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ, ປະເພດກິດຈະກຳທີ່ຈະຈັດຕັ້ງປະຕິບັດ ແລະ ອື່ນໆ.

ໃນບາງກໍລະນີ ອາດຈະອອກໜັງສືຢັ້ງຢືນຮັບຮອງຖາວອນ ໃຫ້ອົງການເກັບກູ້ລະເບີດເລີຍ ໂດຍອີງໃສ່ການປະເມີນຜົນເບື້ອງຕົ້ນພຽງຢ່າງດຽວ.

### 7.2.1. ໄລຍະເວລາຂອງໜັງສືຢັ້ງຢືນຮັບຮອງ

ໄລຍະເວລາອອກໜັງສືຢັ້ງຢືນຮັບຮອງຂຶ້ນຢູ່ກັບເງື່ອນໄຂຂອງບັນດາອົງປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງທີ່ກ່ຽວຂ້ອງຄື:

**ກ.** ອົງການຈັດຕັ້ງຂອງລັດຖະບານລາວທີ່ຖືກມອບໃຫ້ປະຕິບັດວຽກມະນຸດສະທຳ ຫຼື ກິດຈະການແກ້ໄຂບັນລະເບີດບໍ່ທັນແຕກຕົກຄ້າງ ເພື່ອການພັດທະນາ ຈະໄດ້ຮັບໜັງສືຢັ້ງຢືນຮັບຮອງຖາວອນບໍ່ມີຂອບເຂດຈຳກັດ.

ຂ. ອົງການຕ່າງປະເທດ ແລະ ອົງການຈັດຕັ້ງຂອງລາວທີ່ປະຕິບັດວຽກເກັບກູ້ລະເບີດທີ່ບໍ່ສັງກັດລັດຖະບານ ໂດຍບໍ່ ສະແຫວງຫາຜົນກຳໄລ. ສຳລັບໜັງຢັ້ງຢືນຮັບຮອງທີ່ຈະອອກໃຫ້ ຕ້ອງໄດ້ປະຕິບັດຕາມໄລຍະເວລາຂໍ້ຕົກລົງເຫັນດີຂອງໂຄງການທີ່ເຊັນຮ່ວມກັບລັດຖະບານ ສປປ ລາວ ໃນປັດຈຸບັນ. ສ່ວນການສືບຕໍ່ໜັງສືຢັ້ງຢືນຮັບຮອງ ດ້ານການເກັບກູ້ ລບຕ ຕ້ອງຂຽນໜັງສືສະເໜີເຖິງ ຄຊກລ ເພື່ອຈະໄດ້ຄົ້ນຄ້ວາ ພິຈາລະນາໃຫ້ແທດເໝາະກັບໄລຍະເວລາຕາມຂໍ້ຕົກລົງເຫັນດີຂອງໂຄງການທີ່ລັດຖະບານອະນຸມັດຕໍ່ໃຫ້.

ຄ. ບັນດາອົງການທີ່ປະຕິບັດງານເກັບກູ້ລະເບີດແບບທຸລະກິດ. ການຢັ້ງຢືນຮັບຮອງຈະໄດ້ອອກໃຫ້ເປັນໄລຍະເວລາໜຶ່ງປີ, ຖ້າຈະມີການສືບຕໍ່ຕ້ອງຍື່ນໜັງສືສະເໜີຂໍຕໍ່ໃຫ້ ຄຊກລ ກ່ອນໜຶ່ງເດືອນ, ກ່ອນໝົດອາຍຸໜຶ່ງປີ.

ການຂໍຕໍ່ໜັງສືຢັ້ງຢືນຮັບຮ້ອງ ຈະຂຶ້ນກັບການຕົກລົງເຫັນດີໃນກອງປະຊຸມຂອງ ຄຊກລ ທີ່ຄົ້ນຄ້ວາ, ພິຈາລະນາສຳລັບໜັງສືຢັ້ງຢືນຮັບຮອງ ແລະ ອາດຈະວາງບາງຂໍ້ຫ້າມ ຫຼື ຂອບເຂດຈຳກັດໃດໜຶ່ງຢູ່ໃນໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ອົງການປະຕິບັດງານ ດ້ານລະເບີດບໍ່ທັນແຕກຕົກຄ້າງ ຕາມທີ່ເຫັນສົມຄວນ.

ທີ່ລະບຸໄວ້ຂ້າງເທິງນັ້ນ, ໜັງສືຢັ້ງຢືນຖາວອນ ສຳລັບການເກັບກູ້ລະເບີດບໍ່ທັນແຕກ ໂດຍການນຳໃຊ້ໝາ ແມ່ນນຳໃຊ້ໄດ້ພຽງ 6 ເດືອນເທົ່ານັ້ນ ຫຼັງຈາກໃຊ້ເວລາໃນການທົດລອງຢັ້ງຢືນຮັບຮອງວ່າປະຕິບັດໄດ້ ແມ່ນຖືກຕ້ອງສອດຄ່ອງກັບມາດຕະຖານແຫ່ງຊາດ ໃນບົດທີ 9 ດັ່ງກ່າວນີ້.

### 7.2.2. ການສືບຕໍ່ນຳໃຊ້ໜັງສືຢັ້ງຢືນຮັບຮອງ

ການສືບຕໍ່ນຳໃຊ້ໜັງສືຢັ້ງຢືນຮັບຮອງ ສາມາດນຳໃຊ້ໄດ້ຫາກຍັງປະຕິບັດສອດຄ່ອງກັບມາດຖານແຫ່ງຊາດ ທີ່ລະບຸໄວ້ໃນຂໍ້ທີ 6 ຂ້າງເທິງ.

ຄຊກລ ຈະສະຫງວນໃນການໂຈະ ຫຼື ຢຸດຕິໜັງສືຢັ້ງຢືນຮັບຮອງໃດໜຶ່ງຕາມທີ່ໄດ້ກຳນົດໃນມາດຕະຖານແຫ່ງຊາດຂອງບົດນີ້.

### 7.3. ການສະເໜີຂໍໜັງສືຢັ້ງຢືນຮັບຮອງ

ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະຕ້ອງຍື່ນຄຳຮ້ອງສະເໜີຂໍໜັງສືຢັ້ງຢືນຮັບຮອງ ເຖິງ ຄຊກລ ໂດຍຕ້ອງລະບຸປະເພດໜັງສືຢັ້ງຢືນຮັບຮອງທີ່ສະເໜີຂໍ ແລະ ປະກອບເອກະສານທີ່ກ່ຽວຂ້ອງໄປພ້ອມ.

ສຳລັບຮ່າງ ຄຳຮ້ອງສະເໜີຂໍໜັງສືຢັ້ງຢືນຮັບຮອງ ແລະ ຄຳແນະນຳ ຕໍ່ກັບເອກະສານທີ່ຕ້ອງປະກອບມາກັບຄຳຮ້ອງ ມີຢູ່ໃນເອກະສານສະໜັບສະໜູນຂອງມາດຕະຖານແຫ່ງຊາດ ວ່າດ້ວຍ **"ລະບຽບການການອອກໜັງສືຢັ້ງຢືນຮັບຮອງ ຈາກ ຄຊກລ ຢູ່ໃນ ສປປ ລາວ"**.

## 7.4. ການພິຈາລະນາຄໍາຮ້ອງ

ຄຊກລ ຈະແຈ້ງຮັບຄໍາຮ້ອງ ແລະ ເອກະສານຕິດຄັດຕ່າງໆ ທີ່ອີງການປະຕິບັດງານດ້ານລະເບີດບໍ່ທັນແຕກ ສະເໜີມາ ພາຍໃນ 5 ວັນທາງລັດຖະການ ແລະ ຈະເລີ່ມພິຈາລະນາຄໍາຮ້ອງດັ່ງກ່າວ. ຄຊກລ ອາດສະເໜີໃຫ້ຜູ້ຍື່ນຄໍາຮ້ອງ ສະໜອງຂໍ້ມູນເພີ່ມຕື່ມຕາມຄວາມຕ້ອງການ.

ຖ້າເປັນໄປໄດ້ ການພິຈາລະນາໜັງສືຢັ້ງຢືນຮັບຮອງຖາວອນ ຈະຕ້ອງກວມເອົາທຸກຂົງເຂດຂໍ້ມູນທີ່ສໍາຄັນ ທີ່ກໍານົດຢູ່ລຸ່ມນີ້:

ກ. ໜັງສືອະນຸມັດໃຫ້ປະຕິບັດວຽກງານຢູ່ ສປປ ລາວ ທີ່ມີໃນປະຈຸບັນເຊັ່ນວ່າໜັງສືອະນຸຍາດດໍາເນີນການປະຕິບັດງານຫຼື ໜັງສືອະນຸຍາດດໍາເນີນທຸລະກິດ.

ຂ. ໂຄງຮ່າງການຈັດຕັ້ງ ທີ່ສະເໜີຈັດຕັ້ງຂຶ້ນຢູ່ ສປປ ລາວ, ລວມທັງແຜນດໍາເນີນການ ທີ່ປະຕິບັດພາຍໃຕ້ຜູ້ຮັບເໝົາຕໍ່ຊ່ວງ ແລະ ວິສາຫະກິດປະສົມ.

ຄ. ຄຸນວຸດທິ ແລະ ປະສົບການ ຂອງພະນັກງານບໍລິຫານຄຸ້ມຄອງ ແລະ ວິຊາການ ທີ່ເປັນຫົວຈັກຫຼັກແຫຼ່ງ.

ງ. ປະສົບການ ກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກໃນໄລຍະຜ່ານມາ.

ຈ. ຄວາມສາມາດຂອງອົງການ ໃນການເກັບກູ້ລະເບີດບໍ່ທັນແຕກດ້ວຍກົນຈັກ ແລະ ດ້ວຍໝາກວດລະເບີດ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ ຫຼື ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ. ໃນກໍລະນີທີ່ສະເໜີຂໍໜັງສືຢັ້ງຢືນຮັບຮອງ ສໍາລັບກິດຈະກໍາການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ ຫຼື ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ ແມ່ນໃຫ້ສະເໜີແຜນໂຄງການທີ່ຕົນຈະປະຕິບັດມາພ້ອມ.

ສ. ມາດຕະຖານການປະຕິບັດງານສໍາລັບການເກັບກູ້ລະເບີດບໍ່ທັນແຕກ (SOP's).

ຊ. ລະບົບການຄຸ້ມຄອງຄຸນນະພາບ.

ຍ. ລະບົບບໍລິຫານຄຸ້ມຄອງຂໍ້ມູນຂ່າວສານ.

ດ. ສໍານັກງານໃຫຍ່ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ທີ່ຈະສ້າງຕັ້ງຂຶ້ນ.

ຕ. ລະບຽບບໍລິຫານຄຸ້ມຄອງຊັບພະຍາກອນມະນຸດ ລວມມີ: ນະໂຍບາຍການມີໂອກາດມີວຽກເຮັດງານທໍາທີ່ເທົ່າທຽມກັນ ໂດຍບໍ່ຈໍາແນກອາຍຸ, ເພດໄວ, ເຊື້ອຊາດ, ຊົນເຜົ່າ, ສາດສະໜາ, ຄວາມເປັນພິການ ຫຼື ຖານະທາງສັງຄົມ.

ໝາຍເຫດ: ໃນກໍລະນີການປະຕິບັດງານທີ່ຕ້ອງການພະນັກງານທີ່ມີຮ່າງກາຍສົມບູນ ແລະ ມີສຸຂະພາບແຂງແຮງ ເພື່ອຮັບປະກັນຄວາມປອດໄພ ແລະ ປະສິດທິພາບ ຂອງການປະຕິບັດງານ, ກໍສາມາດກໍານົດເງື່ອນໄຂທາງດ້ານຮ່າງກາຍ ແລະ ສຸຂະພາບຂັ້ນພື້ນຖານໃນມາດຖານການຮັບສະໝັກພະນັກງານ, ການຝຶກອົບຮົມ ແລະ ການເລື່ອນຂັ້ນໄດ້.

ທ. ຄວາມສາມາດດ້ານອຸປະກອນ ແລະ ການສະໜັບສະໜູນແກ່ການປະຕິບັດງານ (ບໍ່ນັບການປະຕິບັດງານດ້ວຍກົນຈັກ ເພາະໄດ້ກໍານົດສະເພາະໃນ ອານຸວັກ ຈ ຂ້າງເທິງ).

ນ. ລະບົບຄຸ້ມຄອງການສະໜອງ-ຈັດຊື້.

ບ. ນະໂຍບາຍຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ.

ປ. ການປະກັນໄພ ຫຼື ການກະກຽມອື່ນ ເພື່ອຮັບປະກັນການຊ່ວຍເຫຼືອ ແລະ ຊົດເຊີຍໃຫ້ຜູ້ເຄາະຮ້າຍ ຈາກອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

ໝາຍເຫດ: ຢ່າງໜ້ອຍສຸດ ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຕ້ອງປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດໃນ ມາດຕາ 55 ແລະ 56 ຂອງກົດໝາຍແຮງງານ ສະບັບປັບປຸງ ລົງວັນທີ 27 ທັນວາ 2006 ວ່າດ້ວຍການຊ່ວຍເຫຼືອ ແລະ ຊົດເຊີຍແກ່ຜູ້ປະສົບເຄາະຮ້າຍຈາກອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

ຜ. ໜັງສືຢັ້ງຢືນຮັບຮອງການປະຕິບັດງານດ້ານລະເບີດບໍ່ທັນແຕກອື່ນທີ່ອົງການກ່ຽວຂ້ອງມີຢູ່. ບັນດາເອກະສານທີ່ສ້າງຂຶ້ນມາຕ້ອງເປັນສອງພາສາຄື: ພາສາລາວ.

ການປະເມີນຜົນເບື້ອງຕົ້ນເອກະສານຄຳຮ້ອງຂໍໜັງສືຢັ້ງຢືນຮັບຮອງ ຈະປະຕິບັດໂດຍອີງໃສ່ວັດຖຸປະສົງທີ່ກຳນົດໄວ້ໃນບັນຊີລາຍການກວດກາ, ຊຶ່ງກຳນົດໄວ້ໃນເອກະສານສະໜັບສະໜູນຂອງ ມາດຕະຖານແຫ່ງຊາດ ວ່າດ້ວຍ "ລະບຽບ **ການອອກໜັງສືຢັ້ງຢືນຮັບຮອງ ຈາກ ຄຊກລ ໃນ ສປປ ລາວ**".

ຜົນຂອງການປະເມີນເອກະສານເບື້ອງຕົ້ນ ຈະໄດ້ແຈ້ງໃຫ້ບັນດາອົງການຈັດຕັ້ງທີ່ປະຕິບັດງານດ້ານການເກັບກູ້ລະເບີດບໍ່ທັນແຕກທີ່ກ່ຽວຂ້ອງພາຍໃນ 20 ຕາມໂມງລັດຖະການ, ນັບແຕ່ມື້ ຄຊກລ ແຈ້ງຮັບເອກະສານທັງໝົດທີ່ປະກອບມາ

ຖ້າການປະເມີນຜົນເບື້ອງຕົ້ນຫາກສອດຄ່ອງກັບເງື່ອນໄຂທີ່ກຳນົດໄວ້, ຄຊກລ ຈະປະຕິບັດຢ່າງໃດຢ່າງໜຶ່ງດັ່ງນີ້:

ກ. ອອກໜັງສືຢັ້ງຢືນຮັບຮອງຊົ່ວຄາວໃຫ້ກ່ອນ ເພື່ອໃຫ້ອົງການດັ່ງກ່າວ ສາມາດເລີ່ມປະຕິບັດວຽກງານໄດ້ໃນລະຫວ່າງລໍຖ້າການປະເມີນຜົນການປະຕິບັດງານພາກສະໜາມ.

ຄ. ອອກໜັງສືຢັ້ງຢືນຮັບຮອງຖາວອນໃຫ້ ໂດຍອີງໃສ່ພື້ນຖານການປະເມີນຜົນເບື້ອງຕົ້ນເທົ່ານັ້ນ.

ໃນໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ ອາດມີການວາງຂໍ້ຈຳກັດ ຫຼື ເງື່ອນໄຂໃດໜຶ່ງ ຂອງການຢັ້ງຢືນຮັບຮອງຕາມຄວາມເໝາະສົມ.

ຖ້າ ຄຊກລ ເຫັນວ່າ ເອກະສານສະເໜີຂໍໜັງສືຢັ້ງຢືນຮັບຮອງ ບໍ່ຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້, ຈະຕ້ອງແຈ້ງໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກກ່ຽວຂ້ອງຊາບ ຕາມເວລາທີ່ກຳນົດຂ້າງເທິງ. ພ້ອມທັງ ເຫດຜົນທີ່ຄຳຮ້ອງບໍ່ຖືກຕ້ອງຕາມເງື່ອນໄຂ ແລະ ໃຫ້ໂອກາດແກ່ຜູ້ຍື່ນຄຳຮ້ອງປະຕິບັດມາດຕະການແກ້ໄຂໃຫ້ຖືກຕ້ອງ.

ຖ້າອົງການທີ່ສະເໜີຂໍໜັງສືຢັ້ງຢືນຮັບຮອງ ບໍ່ສາມາດ ຫຼື ບໍ່ຕ້ອງການ ທີ່ຈະແກ້ໄຂຂໍ້ບົກພ່ອງ ຕາມໄລຍະເວລາທີ່ ຄຊກລ ກຳນົດ, ການພິຈາລະນາຄຳຮ້ອງຈະຖືກຢຸດຕິ ແລະ ຈະແຈ້ງໃຫ້ອົງການທີ່ຍື່ນຄຳຮ້ອງຊາບວ່າ ໜັງສືສະເໜີດັ່ງກ່າວຈະບໍ່ໄດ້ຮັບການພິຈາລະນາອີກຕໍ່ໄປ.

## 7.5. ການປະເມີນຜົນການປະຕິບັດງານຢູ່ພາກສະໜາມ

ຈຸດປະສົງຂອງການປະເມີນຜົນການປະຕິບັດງານຢູ່ພາກສະໜາມ ກໍເພື່ອຢັ້ງຢືນວ່າ ອົງການປະຕິບັດງານດ້ານລະເບີດ ໄດ້ນຳໃຊ້ລະບຽບການບໍລິຫານຄຸ້ມຄອງ ແລະ ການປະຕິບັດງານ ທີ່ໄດ້ຮັບຮອງໃນລະຫວ່າງການຢັ້ງຢືນຮັບຮອງ ເຂົ້າໃນການປະຕິບັດງານ ແລະ ບໍລິຫານຄຸ້ມຄອງ ດ້ວຍຄວາມປອດໄພ, ມີປະສິດທິຜົນ ແລະ ປະສິດທິພາບ.

ການປະເມີນຜົນການປະຕິບັດງານຢູ່ພາກສະໜາມ ອາດຈະດຳເນີນໂດຍ ຄຊກລ ຫຼື ອົງການທີ່ເປັນຕົວແທນປະຕິບັດໃນນາມຂອງ ຄຊກລ. ໃນການປະເມີນຜົນອາດຈະປະຕິບັດດັ່ງລຸ່ມນີ້:

ກ. ຢ້ຽມຢາມຫ້ອງການບໍລິຫານຄຸ້ມຄອງ ແລະ ຫ້ອງການຊ່ວຍວຽກ ຫຼື ສິ່ງອຳນວຍຄວາມສະດວກຕ່າງໆ.

ຂ. ສັງເກດການຝຶກອົບຮົມ.

ຄ. ເບິ່ງການທົດສອບ ອຸປະກອນປະຕິບັດງານຕົວຈິງ.

ງ. ກວດກາເບິ່ງອຸປະກອນ.

ຈ. ສັງເກດການ ແລະ ຕີລາຄາການປະຕິບັດງານຂອງກົນຈັກ ແລະ ຄະນະໜາກວດລະເບີດຢູ່ສະໜາມທົດສອບ.

ສ. ຢ້ຽມຢາມສະໜາມປະຕິບັດງານ ແລະ ສັງເກດກິດຈະກຳການປະຕິບັດງານດ້ານລະເບີດບໍ່ທັນແຕກ.

ການປະເມີນຜົນການປະຕິບັດງານຢູ່ພາກສະໜາມຂອງອົງການທີ່ສະເໜີຂໍໜັງສືຢັ້ງຢືນຮັບຮອງ ຈະປະຕິບັດໂດຍອີງໃສ່ບັນຊີລາຍການກວດກາທີ່ກຳນົດໃນເອກະສານສະໜັບສະໜູນ ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ **"ລະບຽບການອອກໜັງສືຢັ້ງຢືນຮັບຮອງ ຈາກ ຄຊກລ ຢູ່ໃນ ສປປ ລາວ"**.

ໃນເວລາດຳເນີນການກວດກາການປະຕິບັດງານພາກສະໜາມ ຫາກເຫັນວ່າການປະຕິບັດງານບໍ່ສອດຄ່ອງກັບເງື່ອນໄຂຂອງການຢັ້ງຢືນຮັບຮອງ, ຄຊກລ ຫຼື ອົງການທີ່ເປັນຕົວແທນຂອງ ຄຊກລ ຕ້ອງແຈ້ງໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກຊາບໂດຍໄວເທົ່າທີ່ໄວໄດ້. ຂໍ້ຂາດຕົກບົກພ່ອງຈະຕ້ອງຖືກກຳນົດ ແລະ ມາດຕະການແກ້ໄຂຈະຕ້ອງມີການປຶກສາ ແລະ ເຫັນດີນຳກັນ ລະຫວ່າງ ຄຊກລ ກັບອົງການທີ່ສະເໜີຂໍໜັງສືຢັ້ງຢືນຮັບຮອງ.

ຈາກນັ້ນ ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະຕ້ອງປະຕິບັດມາດຕະການແກ້ໄຂ ແລະ ສະແດງໃຫ້ເຫັນວ່າ ໄດ້ແກ້ໄຂໃຫ້ຖືກຕ້ອງກັບເງື່ອນໄຂທີ່ໄດ້ເຫັນດີນຳກັນ ໃນກຳນົດເວລາອັນເໝາະສົມຕາມທີ່ ຄຊກລ ກຳນົດ . ການພິຈາລະນາຄຳຮ້ອງສະເໜີຂໍໜັງສືຢັ້ງຢືນຮັບຮອງຈະຢຸດຕິລົງ ຖ້າອົງການປະຕິບັດງານດ້ານລະເບີດ ບໍ່ສາມາດ ຫຼື ບໍ່ປະສົງ ຈະປະຕິບັດມາດຕະການແກ້ໄຂຂໍ້ບົກພ່ອງຂອງຕົນ.

## 8. ຂັ້ນຕອນຂອງການອຸທອນ

ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ສະເໜີຂໍໜັງສືຢັ້ງຢືນຮັບຮອງ ຫຼື ປະຕິບັດງານຕາມໜັງສືຢັ້ງຢືນຮັບຮອງທີ່ຕົນມີຢູ່ ມີສິດອຸທອນຄຳຕັດສິນຂອງ ຄຊກລ. ການອຸທອນຈະຕ້ອງເຮັດເປັນລາຍລັກອັກສອນ ແລະ ຍື່ນເຖິງ ຄະນະກຳມະການ ຄຊກລ ທີ່ເປັນຜູ້ຊີ້ນຳ ການປະຕິບັດງານຂອງ ຄຊກລ.

ໃນໜັງສືອຸທອນຕ້ອງລະບຸເນື້ອໃນຂອງການຂໍອຸທອນ ແລະ ຫຼັກຖານທີ່ກ່ຽວຂ້ອງ ທີ່ສະໜັບສະໜູນໃຫ້ຄຳອຸທອນ. ທຸກຄຳອຸທອນຈະຖືກພິຈາລະນາບົນພື້ນຖານຂອງແຕ່ລະກໍລະນີ.

## 9. ການຢັ້ງຢືນຮັບຮອງອຸປະກອນ ແລະ ກິດຈະກຳສະເພາະ

ໃນຂໍ້ທີ 7 ຂ້າງເທິງ ກ່າວເຖິງການປະເມີນຜົນທົ່ວໄປ ທີ່ປະຕິບັດໃນຂັ້ນຕອນພິຈາລະນາໜັງສືຢັ້ງຢືນຮັບຮອງ. ເຖິງຢ່າງໃດກໍຕາມ, ການນຳໃຊ້ອຸປະກອນເກັບກູ້ລະເບີດບາງຊະນິດ ແລະ ການດຳເນີນກິດຈະກຳເກັບກູ້ລະເບີດບາງຢ່າງ ມີຄວາມຈຳເປັນຕ້ອງປະເມີນຜົນຕື່ມອີກ. ອຸປະກອນ ແລະ ກິດຈະກຳເຫຼົ່ານີ້ມີຄື:

ກ. ກົນຈັກທີ່ນຳໃຊ້ເຂົ້າໃນການເກັບກູ້ລະເບີດ.

ຂ. ຄະນະໜາກວດລະເບີດ.

ຄ. ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ.

ງ. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ.

### 9.1. ເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການເກັບກູ້ລະເບີດບໍ່ທັນແຕກ

ນອກຈາກການປະເມີນຜົນທີ່ລະບຸໃນຂໍ້ທີ 7 ຂ້າງເທິງ ຍັງຈະມີການປະເມີນຜົນປັດໄຈຕ່າງໆ ສຳລັບເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການເກັບກູ້ລະເບີດ ຊຶ່ງມີດັ່ງລຸ່ມນີ້:

ກ. ຄວາມເໝາະສົມຂອງເຄື່ອງຈັກ ຕໍ່ກັບສະພາບເງື່ອນໄຂຂອງພື້ນທີ່ ທີ່ເຄື່ອງຈັກຈະຖືກນຳໄປໃຊ້.

ຂ. ສຳລັບເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການເກັບກູ້ລະເບີດທີ່ບໍ່ທັນແຕກ ຕ້ອງແມ່ນເຄື່ອງຈັກທີ່ປະຕິບັດງານດ້ວຍການເຮັດໃຫ້ ແຕກສະຫຼາຍ, ຖືກທຳລາຍ, ລະເບີດຂຶ້ນ ຫຼື ຄັດຈ້ອນແຍກ ລະເບີດອອກຈາກດິນ.

ຄ. ລັກສະນະຄວາມສ່ຽງ ຈາກຊິ້ນສ່ວນເສດເຫຼືອທີ່ເປັນອັນຕະລາຍທີ່ອາດຕົກຄ້າງ ຈາກການປະຕິບັດງານຂອງເຄື່ອງຈັກເກັບກູ້ລະເບີດ ແລະ ຮູບແບບ ແລະ ລັກສະນະ ໃນການປະຕິບັດກັບຊິ້ນສ່ວນສິ່ງເສດເຫຼືອທີ່ເປັນອັນຕະລາຍທີ່ຕົກຄ້າງ.

ງ. ຄວາມປອດໄພຕໍ່ກັບ ເຄື່ອງຈັກ, ຜູ້ຄວບຄຸມເຄື່ອງຈັກ, ຜູ້ຊີ້ນຳກວດກາ ແລະ ບຸກຄະລາກອນ ທີ່ປະຕິບັດງານຢູ່ສະໜາມເກັບກູ້ລະເບີດດ້ວຍກົນຈັກ.

ຈ. ລະບຽບການປະຕິບັດງານ ສຳລັບການນຳໃຊ້ເຄື່ອງກົນຈັກ ເປັນຕົ້ນ: ລະບົບບໍລິຫານຄຸ້ມຄອງ, ການຊີ້ນຳ, ການສະໜອງ ແລະ ລະບົບສະໜັບສະໜູນອື່ນໆ.

ສ. ລະບຽບການປະຕິບັດງານ ໃນກໍລະນີທີ່ນຳໃຊ້ກົນຈັກຮ່ວມກັບວິທີການເກັບກູ້ອື່ນ ເຊັ່ນ: ການເກັບກູ້ລະເບີດດ້ວຍມື ຫຼື ການເກັບກູ້ລະເບີດໂດຍນຳໃຊ້ໝາ.

### 9.2. ຄະນະໝາກວດລະເບີດ (EDD Teams)

ນອກຈາກການປະເມີນຜົນທີ່ລະບຸໃນ ຂໍ້ທີ 7 ຂ້າງເທິງ ຍັງຈະມີການປະເມີນຜົນປັດໄຈຕ່າງໆ ທີ່ກ່ຽວຂ້ອງກັບການນຳໃຊ້ ຄະນະໝາກວດລະເບີດ, ຊຶ່ງມີດັ່ງລຸ່ມນີ້:

ກ. ຄຸນວຸດທິ ແລະ ປະສົບການ ຂອງຜູ້ບັນຊາໝາກວດລະເບີດແຕ່ລະຄົນ.

ຂ. ການປະຕິບັດງານຂອງໝາກວດລະເບີດແຕ່ລະໂຕໃນການທົດສອບເພື່ອອອກໜັງສືຢັ້ງຢືນຮັບຮອງ. ລາຍລະອຽດການທົດສອບເພື່ອອອກໜັງສືຢັ້ງຢືນຮັບຮອງ ໃຫ້ໝາກວດລະເບີດ ໄດ້ກຳນົດໄວ້ໃນ **"ລະບຽບການອອກໜັງສືຢັ້ງຢືນຮັບຮອງ ຈາກ ຄຊກລ ຢູ່ໃນ ສປປ ລາວ"**. ສຳເນົາຂອງ ລະບຽບການນີ້ ໄດ້ບັນຈຸໄວ້ໃນເອກະສານສະໜັບສະໜູນຂອງ ມາດຕະຖານແຫ່ງຊາດ.

ຄ. ລະບຽບການປະຕິບັດງານ ໃນການນຳໃຊ້ຄະນະໝາກວດລະເບີດ ລວມມີ: ລະບົບຄຸ້ມຄອງບໍລິຫານ, ການຊີ້ນຳ ແລະ ລະບົບສະໜັບສະໜູນອື່ນໆ.

ງ. ລະບົບການຈັດສະຖານທີ່ພັກເຊົາໃຫ້ໝາ (ຄອກໝາ), ວຽກງານສັດຕະວະແພດ ແລະ ການສະໜັບສະໜູນອື່ນໆ ໃຫ້ແກ່ຄະນະໝາກວດລະເບີດ.

ຈ. ລະບຽບການປະຕິບັດງານ ໃນການນຳໃຊ້ໝາກວດລະເບີດ ເຂົ້າສົມທົບກັບການເກັບກູ້ລະເບີດບໍ່ທັນແຕກອື່ນໆ ເຊັ່ນ: ການປະຕິບັດງານການເກັບກູ້ດ້ວຍມື ຫຼື ການເກັບກູ້ລະເບີດດ້ວຍກົນຈັກ.

## 9.3. ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ

ທຸກອົງການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ ຈະຕ້ອງໄດ້ຮັບການຢັ້ງຢືນຮັບຮອງ ເພື່ອປະຕິບັດງານໃນ ສປປ ລາວ. ນອກຈາກການປະເມີນຜົນທີ່ກຳນົດໃນ ຂໍ້ທີ 7 ຂ້າງເທິງແລ້ວ ຍັງຈະມີການປະເມີນຜົນແຜນງານໂຄງການ ທີ່ອົງການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ ສະເໜີມາຕື່ມອີກ. ການປະເມີນຜົນດັ່ງກ່າວ ກໍເພື່ອຮັບປະກັນໃຫ້ ການອອກແບບວາງແຜນ ແລະ ພັດທະນາແຜນໂຄງການ ສອດຄ່ອງກັບເງື່ອນໄຂທີ່ກຳນົດໃນ **ບົດທີ 13 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ ແລະ ກັບລະເບີດຝັງດິນ"**.

## 9.4. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດບໍ່ທັນແຕກ

ທຸກອົງການທີ່ມີຄວາມປະສົງຈະປະຕິບັດວຽກງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດສະເພາະ ຈະຕ້ອງໄດ້ຮັບການຢັ້ງຢືນຮັບຮອງເພື່ອປະຕິບັດງານຢູ່ ສປປ ລາວ. ນອກຈາກການປະເມີນຜົນທີ່ກຳນົດໃນ ຂໍ້ທີ 7 ຂ້າງເທິງແລ້ວ, ຍັງຈະໄດ້ປະເມີນຜົນແຜນໂຄງການທີ່ອົງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍສະເໜີມາ. ການປະເມີນຜົນດັ່ງກ່າວ ກໍ່ເພື່ອຮັບປະກັນໃຫ້ ການອອກແບບວາງແຜນ ແລະ ພັດທະນາແຜນໂຄງການ ສອດຄ່ອງກັບເງື່ອນໄຂທີ່ກຳນົດໃນ ບົດທີ 14 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ **"ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ"**.

## 10. ການທົບທວນຄືນ ແລະ ການປ່ຽນແປງໜັງສືຢັ້ງຢືນຮັບຮອງ ທີ່ໄດ້ອະນຸມັດໃຫ້

ກໍລະນີທີ່ຕ້ອງມີການທົບທວນຄືນ ຫຼື ອາດຈະປ່ຽນແປງໜັງສືຢັ້ງຢືນຮັບຮອງທີ່ໄດ້ອະນຸມັດໃຫ້ນັ້ນ ແມ່ນມີຢູ່ສາມກໍລະນີດັ່ງລຸ່ມນີ້:

ກ. ມີການປັບປ່ຽນພະນັກງານ ທີ່ເປັນບຸກຄົນທີ່ສຳຄັນຂອງອົງການເກັບກູ້ ລບຕ/ລະເບີດຝັງດິນ, ປ່ຽນແປງດ້ານ ການບໍລິຫານ ແລະ ວິຊາການຕ່າງໆ.

ຂ. ການປັບປຸງປ່ຽນແປງລະບຽບການປະຕິບັດງານຂອງ ໜຶ່ງ ຫຼື ຫຼາຍກິດຈະກຳ ການປະຕິບັດງານດ້ານລະເບີດບໍ່ທັນແຕກຂອງອົງການ ທີ່ໄດ້ຮັບການຢັ້ງຢືນຮັບຮອງໃຫ້ນຳໃຊ້ໃນປັດຈຸບັນ.

ຄ. ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ສ້າງຕັ້ງໜ່ວຍປະຕິບັດງານດ້ານລະເບີດບໍ່ທັນແຕກຂຶ້ນໃໝ່ນອກຈາກທີ່ກຳນົດໄວ້ໃນໜັງສືຢັ້ງຢືນຮັບຮອງທີ່ໄດ້ອະນຸມັດໃຫ້.

ທຸກອົງການທີ່ປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ໄດ້ຮັບການຢັ້ງຢືນຮັບຮອງ ຈະຕ້ອງແຈ້ງການປ່ຽນແປງໃດໜຶ່ງຂອງໂຄງປະກອບການບໍລິຫານຄຸ້ມຄອງ, ລະບຽບການປະຕິບັດງານ ຫຼື ຄວາມປະສົງທີ່ຈະສ້າງຕັ້ງໜ່ວຍປະຕິບັດງານດ້ານລະເບີດບໍ່ທັນແຕກຂຶ້ນໃໝ່ ໃຫ້ ຄຊກລ ຊາບຢ່າງເປັນທາງການ ໂດຍການເຮັດເປັນລາຍລັກອັກສອນ.

ຄຊກລ ຈະເປັນຜູ້ກຳນົດວ່າ ຄວນຈະມີການທົບທວນຄືນໜັງສືຢັ້ງຢືນຮັບຮອງທີ່ມີຢູ່ນັ້ນ ຫຼື ບໍ. ຖ້າການທົບທວນຄືນຫາກມີຄວາມຈຳເປັນ ກໍອາດຈະປະຕິບັດດ້ວຍ ການປະເມີນຜົນເອກະສານຄຳຮ້ອງ ຫຼື ປະເມີນຜົນການປະຕິບັດງານຢູ່ພາກສະໜາມ ຫຼື ທັງ 2 ຢ່າງ. ຖ້າມີການທົບທວນຄືນ, ຄຊກລ ຈະພິຈາລະນາອີກວ່າ ມີຄວາມຈຳເປັນຈະຕ້ອງດັດແປງ "ໜັງສືຢັ້ງຢືນຮັບຮອງ" ທີ່ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ມີຢູ່ ຫຼື ບໍ່.

ນອກນັ້ນ, ຖ້າການສະເໜີປ່ຽນແປ່ງຫາກພົວພັນກັບການສ້າງຕັ້ງໜ່ວຍງານປະຕິບັດງານດ້ານລະເບີດບໍ່ທັນແຕກຂຶ້ນມາໃໝ່, ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະຕ້ອງສະໜອງລາຍລະອຽດທີ່ພົວພັນກັບໜ່ວຍງານໃໝ່ນັ້ນ ໃຫ້ ຄຊກລ ເພື່ອພິຈາລະນາ ຊຶ່ງມີດັ່ງຕໍ່ໄປນີ້:

ກ. ກຳນົດກິດຈະການທີ່ຈະປະຕິບັດ.

ຂ. ໂຄງຮ່າງການຈັດຕັ້ງຂອງອົງການ.

ຄ. ລະບຽບໃນການບໍລິຫານຄຸ້ມຄອງ ແລະ ການສະໜັບສະໜູນ.

ງ. ຄຸນວຸດທິ ແລະ ປະສົບການ ຂອງພະນັກງານຫຼັກແຫຼ່ງ.

ຈ. ລະບຽບການປະຕິບັດງານທີ່ຈະນຳມາປະຕິບັດ.

ສ. ຂໍ້ກຳນົດໃນການຝຶກອົບຮົມ.

ຊ. ຄາດຄະເນ ຫຼື ຄາດໝາຍຜົນໄດ້ຮັບ ໃນການຈັດຕັ້ງປະຕິບັດຂອງໜ່ວຍງານໃໝ່.

## 10.1. ການວ່າຈ້າງ ຫຼື ການປ່ຽນແທນຊ່ຽວຊານ ຫຼື ພະນັກງານວິຊາການ

ການວ່າຈ້າງ ຫຼື ປ່ຽນແທນ ຊ່ຽວຊານ ຫຼື ພະນັກງານວິຊາການ ພາຍໃນກຸ່ມອາຊີບໃດໜຶ່ງທີ່ເຮັດໃຫ້ມີການປ່ຽນແປງທີ່ສຳຄັນ ຕໍ່ຄວາມອາດສາມາດໃນການບໍລິຫານຄຸ້ມຄອງກິດຈະກຳການປະຕິບັດງານດ້ານລະເບີດບໍ່ທັນແຕກຂອງອົງການກ່ຽວຂ້ອງ. ກຸ່ມອາຊີບດັ່ງກ່າວມີດັ່ງນີ້:

ກ. ວິຊາການທີ່ຮັບຜິດຊອບການຜະລິດ ແລະ ໃສ່ອຸປະກອນອົງຄະທຽມ ແລະ ເຄື່ອງຄ້ຳຊູໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກລະເບີດ.

ຂ. ວິຊາການທີ່ຮັບຜິດຊອບສະໜອງການປິ່ນປົວສະເພາະດ້ານ ໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກລະເບີດ. ວິຊາການເຫຼົ່ານີ້ ລວມມີພະນັກງານທີ່ຮັບຜິດຊອບໃນການສະໜອງດ້ານຕ່າງໆດັ່ງນີ້:

(1) ການປິ່ນປົວດ້ວຍການຜ່າຕັດ ລວມທັງການຜ່າຕັດອະໄວຍະວະແຂນຂາ.

(2) ການສືບຕໍ່ປິ່ນປົວ.

(3) ກາຍຍະບຳບັດ.

(4) ກິດຈະກຳບຳບັດ.

(5) ຈິດຕະແພດ.

ຄ. ວິຊາການເກັບກູ້ລະເບີດ ທີ່ໄດ້ຮັບການຝຶກອົບຮົມມາຈາກຕ່າງປະເທດ ແລະ ຈະປະຕິບັດໜ້າທີ່ເປັນທີ່ປຶກສາດ້ານວິຊາການ ຫຼື ຊີ້ນຳການທຳລາຍລະເບີດ ຊຶ່ງມີຄວາມຮັບຜິດຊອບໂດຍກົງໃນການຄວບຄຸມໜ້າວຽກທຳລາຍ.

ເມື່ອອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ມີຄວາມປະສົງທີ່ຈະວ່າຈ້າງພະນັກງານໃໝ່ ຫຼື ປ່ຽນແທນພະນັກງານ ໃນກຸ່ມອາຊີບທີ່ກຳນົດດັ່ງຂ້າງເທິງນັ້ນ, ຈະຕ້ອງແຈ້ງໃຫ້ ຄຊກລ ຊາບ ໂດຍໃຫ້ສອດຄ່ອງກັບຂໍ້ກຳນົດທີ່ລະບຸໃນຂໍ້ທີ 10 ຂ້າງເທິງ.

## 11. ຂໍ້ຫ້າມ ຫຼື ຂໍ້ຈຳກັດ ຂອງໜັງສືຢັ້ງຢືນຮັບຮອງ

ຄຊກລ ອາດຈະວາງຂໍ້ຫ້າມ ຫຼື ຂໍ້ຈຳກັດໃດໜຶ່ງ ຢູ່ໃນໜັງສືຢັ້ງຢືນຮັບຮອງທີ່ອອກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຖ້າພິຈາລະນາເຫັນວ່າ ມີຄວາມຈຳເປັນຕໍ່ຄວາມປອດໄພ ຫຼື ປະສິດທິພາບຂອງການປະຕິບັດງານ.

## 12. ການໂຈະ ຫຼື ການຢຸດຕິໜັງສືຢັ້ງຢືນຮັບຮອງ

ຄຊກລ ມີສິດທີ່ຈະໂຈະ ຫຼື ຢຸດຕິໜັງສືຢັ້ງຢືນຮັບຮອງ ທີ່ໄດ້ອອກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຖ້າເຫັນວ່າມີຄວາມຈຳເປັນ.

### 12.1. ການໂຈະໜັງສືຢັ້ງຢືນຮັບຮອງ

ໃນກໍລະນີໃດໜຶ່ງ ຄຊກລ ອາດຈະໂຈະໜັງສືຢັ້ງຢືນຮັບຮອງ ທີ່ອອກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຫຼື ໂຈະໜຶ່ງ ຫຼື ຫຼາຍໜ່ວຍງານຍ່ອຍຂອງອົງການກ່ຽວຂ້ອງໃນກຳນົດເວລາໃດໜຶ່ງ. ກໍລະນີທີ່ຈະໂຈະ ໜັງສືຢັ້ງຢືນ ຮັບຮອງມີ:

ກ. ໜັງສືອະນຸມັດການປະຕິບັດງານ ຈາກ ລັດຖະບານ ແຫ່ງ ສປປ ລາວ ໄດ້ໝົດອາຍຸການນຳໃຊ້ ຫຼື ວ່າຖືກໂຈະ.

ຂ ການຕິດຕາມກວດກາໄດ້ພົບຄວາມບໍ່ສອດຄ່ອງກັບເງື່ອນໄຂທີ່ກຳນົດໃນໜັງສືຢັ້ງຢືນຮັບຮອງທີ່ອະນຸມັດໃຫ້ຊຶ່ງຄວາມບໍ່ສອດຄ່ອງນັ້ນອາດຈະບໍ່ຮ້າຍແຮງ ເຖິງຂັ້ນທີ່ຈະຢຸດຕິໜັງສືຢັ້ງຢືນຮັບຮອງ.

ຄ. ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ບໍ່ແຈ້ງການການປ່ຽນແປງພະນັກງານຫຼັກແຫຼ່ງ, ລະບຽບການປະຕິບັດງານ ຫຼື ການສ້າງຕັ້ງໜ່ວຍງານດ້ານລະເບີດບໍ່ທັນແຕກຂຶ້ນໃໝ່ ໃຫ້ ຄຊກລ ຊາບ.

ການຕັດສິນ ໃນການໂຈະໜັງສືຢັ້ງຢືນຮັບຮອງຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຫຼື ໜ່ວຍງານຍ່ອຍໃດໜຶ່ງຂອງອົງການກ່ຽວຂ້ອງ ແມ່ນເນື່ອງມາຈາກຂໍ້ຂາດຕົກບົກພ່ອງໃນຂໍ້ຂໍແລະຄໍຂ້າງເທິງ. ຈະປະຕິບັດກໍຕໍ່ເມື່ອອົງການກ່ຽວຂ້ອງໄດ້ນຳໃຊ້ທຸກຄວາມພະຍາຍາມໃນການແກ້ໄຂບັນຫາແລ້ວ
ແຕ່ບໍ່ສາມາດແກ້ໄຂໃຫ້ສຳເລັດໄດ້.

ໃນການໂຈະໜັງສືຢັ້ງຢືນຮັບຮອງ ຄຊກລ ຈະຕ້ອງແຈ້ງຢ່າງເປັນທາງການ ໂດຍອອກ "ໜັງສືແຈ້ງການໂຈະ" ໃຫ້ອົງ ການປະຕິບັດງານດ້ານລະເບີດບໍ່ທັນແຕກ. "ໜັງສືແຈ້ງການໂຈະ" ຈະປະກອບດ້ວຍລາຍລະອຽດດັ່ງນີ້:

ກ. ຂອບເຂດຂອງການໂຈະ (ໜ່ວຍງານທີ່ຈະຖືກໂຈະ).

ຂ. ເຫດຜົນຂອງການໂຈະໜັງສືຢັ້ງຢືນຮັບຮອງ.

ຄ. ມາດຕະການທີ່ຈະນຳໃຊ້ເພື່ອປະຕິບັດການແກ້ໄຂ.

ງ. ກຳນົດເວລາໃນການປະຕິບັດມາດຕະການແກ້ໄຂໃຫ້ສຳເລັດ.

ຈ. ວິທີການທີ່ ຄຊກລ ຈະປະເມີນມາດຕະການທີ່ໄດ້ປະຕິບັດ ເພື່ອແກ້ໄຂສິ່ງທີ່ບໍ່ສອດຄ່ອງ.

ຖ້າເປັນໄປໄດ້, ໃນການກຳນົດມາດຕະການແກ້ໄຂທີ່ຈຳເປັນ ແລະ ກຳນົດເວລາ ໃນການປະຕິບັດມາດຕະການດັ່ງກ່າວ ຈະຕ້ອງໄດ້ຮັບການເຫັນດີຈາກອົງການກ່ຽວຂ້ອງ.

ໃນໄລຍະການໂຈະໜັງສືຢັ້ງຢືນຮັບຮອງ ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຫຼື ໜ່ວຍງານຂອງອົງການກ່ຽວຂ້ອງ (ອີງຕາມຂອບເຂດຂອງການໂຈະ) ຈະບໍ່ອະນຸຍາດໃຫ້ປະຕິບັດງານດ້ານລະເບີດບໍ່ທັນແຕກ ຢູ່ ສປປ ລາວ.

ເມື່ອ ຄຊກລ ໄດ້ຢັ້ງຢືນວ່າ ມາດຕະການແກ້ໄຂໄດ້ປະຕິບັດສຳເລັດແລ້ວ, ເວລານັ້ນ ຈິ່ງຈະແຈ້ງລົບລ້າງການໂຈະໜັງສືຢັ້ງຢືນຮັບຮອງຢ່າງເປັນທາງການ ໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ຖືກໂຈະຊາບ.

ຖ້າອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ບໍ່ສາມາດປະຕິບັດມາດຕະການແກ້ໄຂໃຫ້ສຳເລັດ ພາຍໃນເວລາທີ່ກຳນົດໃຫ້ ອາດມີຜົນເຮັດໃຫ້ຕ້ອງຢຸດຕິໜັງສືຢັ້ງຢືນຮັບຮອງໄດ້.

## 12.2. ການຢຸດຕິໜັງສືຢັ້ງຢືນຮັບຮອງ

ຄຊກລ ອາດພິຈາລະນາຢຸດຕິ ໜັງສືຢັ້ງຢືນຮັບຮອງຂອງອົງການປະຕິບັດງານ ດ້ານລະເບີດບໍ່ທັນແຕກ, ຖ້າຫາກວ່າ:

ກ. ໜັງສືອະນຸມັດການປະຕິບັດງານ ຈາກລັດຖະບານ ແຫ່ງ ສປປ ລາວ ທີ່ໄດ້ໝົດອາຍຸການນຳໃຊ້ແລ້ວ ແລະ ຈະບໍ່ມີການຕໍ່ກຳນົດເວລາໃຫ້ອີກ.

ຂ. ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ສະເໜີຢຸດຕິໜັງສືຢັ້ງຢືນຮັບຮອງເອງ.

ຄ ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ສິ້ນສຸດການປະຕິບັດງານເມື່ອມີການອອກໜັງສືຢັ້ງຢືນຮັບຮອງໃຫ້.

ງ. ຂໍ້ກຳນົດຂອງມາດຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ຫຼື ກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ມີການປ່ຽນແປງ ຊຶ່ງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກບໍ່ສາມາດ ຫຼື ບໍ່ປະສົງທີ່ຈະປະຕິບັດຕາມ.

ຈ. ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ໄດ້ຮັບ “ໜັງສືແຈ້ງການໂຈະ” ບໍ່ສາມາດແກ້ໄຂຂໍ້ບົກຜ່ອງໃຫ້ສຳເລັດຕາມທີ່ກຳນົດໃຫ້.

ສ. ມີການໂຈະໜັງສືຢັ້ງຢືນຮັບຮອງ ຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຕື່ມອີກ.

ຊ. ການຕິດຕາມກວດກາ ຊີ້ໃຫ້ເຫັນຄວາມບໍ່ສອດຄ່ອງ ກັບເງື່ອນໄຂທີ່ກຳນົດໃນໜັງສືຢັ້ງຢືນຮັບຮອງ ທີ່ມີລັກສະນະຮ້າຍແຮງ. ຄວາມບໍ່ສອດຄ່ອງທີ່ມີລັກສະນະຮ້າຍແຮງ ມີຄື:

(1) ລະເມີດຂໍ້ກຳນົດ ຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ.

(2) ປະຕິບັດລະບຽບການປະຕິບັດງານທີ່ໄດ້ອະນຸມັດ ຜິດພາດຊ້ຳຕື່ມອີກ.

(3) ປະຕິເສດການກວດກາພາຍນອກ ໂດຍ ຄຊກລ ຫຼື ອົງການຕົວແທນຂອງ ຄຊກລ.

(4) ແຊກແຊງ ການກວດກາພາຍນອກ ທີ່ດຳເນີນໂດຍ ຄຊກລ ຫຼື ອົງການຕົວແທນຂອງ ຄຊກລ.

ນອກຈາກ ກໍລະນີທີ່ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກກ່ຽວຂ້ອງຮ້ອງຂໍ, ຄຊກລ ຈະພິຈາລະນາຢຸດຕິໜັງສືຢັ້ງຢືນຮັບຮອງ ກໍ່ຕໍ່ເມື່ອມີກໍລະນີຮຸນແຮງເກີນຂອບເຂດ ແລະ ບໍ່ມີວິທີອື່ນໃດ ທີ່ຈະແກ້ໄຂຂໍ້ຂາດຕົກບົກພ່ອງໄດ້.